ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບວັດທະນະຖາວອນ

ກະຊວງການເງິນ

ກົມສ່ວຍສາອາກອນ

ເລກທີ 2798 / ກງ.ກສອ

ນະຄອນຫຼວງວຽງຈັນ, ວັນທີ 08 JUL 2019

**ເຖິງ:** ຫົວໜ້າສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການເກັບອາກອນມູນຄ່າເພີ່ມ ຈາກການສະໜອງການບໍລິການຂົນສົ່ງ.

- ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 26 ມິຖຸນາ 2018;
- ອີງຕາມຂໍ້ຕົກລົງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2834/ນຍ, ລົງວັນທີ 22 ສິງຫາ 2017 ວ່າດ້ວຍການ ຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມສ່ວຍສາອາກອນ;

ເພື່ອເຮັດໃຫ້ການຄຸ້ມຄອງເກັບອາກອນມູນຄ່າເພີ່ມຈາກການສະໜອງການບໍລິການຂົນສົ່ງ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ມີຄວາມເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ.

**ກົມສ່ວຍສາອາກອນ ອອກແຈ້ງການ ດັ່ງນີ້:**

1. ໃຫ້ສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ບັງຄັບໃຊ້ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ) ເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018 ຢ່າງເຂັ້ມງວດ ແລະ ໃຫ້ຢຸດຕິການເກັບອາກອນມູນຄ່າເພີ່ມ ແບບເປັນຖ້ຽວ ຈາກການສະໜອງການບໍລິການຂົນສົ່ງ ຕາມແຈ້ງການ ຫຼື ຄຳແນະນຳທີ່ບັນດາແຂວງ, ນະຄອນຫຼວງ ໄດ້ອອກໃນເມື່ອກ່ອນ.
2. ໃຫ້ສ່ວຍສາອາກອນປະຈຳແຂວງ, ນະຄອນຫລວງ ຊີ້ນຳສ່ວຍສາອາກອນປະຈຳເມືອງ, ເທດສະບານ ແລະ ນະຄອນ ໃນຂອບເຂດທົ່ວປະເທດ ດຳເນີນການຄິດໄລ່ ແລະ ຈັດເກັບອາກອນມູນຄ່າເພີ່ມ ຈາກການສະໜອງການບໍລິການຂົນສົ່ງ ຕາມທີ່ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 26 ມິຖຸນາ 2018 ດັ່ງນີ້:

ສຳລັບ ຜູ້ດຳເນີນທຸລະກິດຂົນສົ່ງທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມຂອງ ສປປ ລາວ ແລະ ຜູ້ທີ່ບໍ່ມີພູມລຳເນົາ:

- ການສະໜອງການບໍລິການຂົນສົ່ງທີ່ເກີດຂຶ້ນຢູ່ໃນດິນແດນ ຂອງ ສປປ ລາວ ທັງໝົດ ໃນຂອບເຂດທົ່ວປະເທດ ໃຫ້ຄິດໄລ່ເກັບ ອາກອນມູນຄ່າເພີ່ມ ຕາມທີ່ໄດ້ກຳນົດໄວ້ຢູ່ໃນ ມາດຕາ 11, 13 ຂໍ້ 2, 15, 17 ຂໍ້ 1, 18, 19, 31 ແລະ 32 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ;
- ການສະໜອງການບໍລິການຂົນສົ່ງຜ່ານແດນສາກົນ ແມ່ນຖືກຍົກເວັ້ນອາກອນມູນຄ່າເພີ່ມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂໍ້ 2.10 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ. ສຳລັບຄວາມໝາຍການຂົນສົ່ງຜ່ານແດນສາກົນ ແມ່ນການຂົນສົ່ງຜູ້ໂດຍສານ ຫຼື ການຂົນສົ່ງສິນຄ້າ ຜ່ານດິນແດນຂອງ ສປປ ລາວ, ໂດຍ ຈຸດເລີ່ມຕົ້ນຂົນສົ່ງຕົ້ນທາງຢູ່ປະເທດໜຶ່ງ ແລະ ຈຸດປາຍທາງຂົນສົ່ງແມ່ນຢູ່ອີກປະເທດໜຶ່ງ, ຖ້າກໍລະນີ ຫາກ ສປປ ລາວ

ບໍ່ມີລະບົບຄ່ຽນ ຖ່າຍສິນຄ້າ ຫຼື ມີລະບົບຄ່ຽນຖ່າຍສິນຄ້າ ຢູ່ໃນ ດິນແດນຂອງ ສປປ ລາວ ແມ່ນຖືເປັນການຂົນສົ່ງຜ່ານແດນສາກົນ ຖືກຍົກເວັ້ນ ອາກອນມູນຄ່າເພີ່ມ.

ສຳລັບ ການສະໜອງບໍລິການຂົນສົ່ງຂອງຜູ່ທີ່ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງວິສາຫະກິດ ຕາມກົດໝາຍຂອງ ສປປ ລາວ ມີການສະໜອງບໍລິການຂົນສົ່ງສິນຄ້າເກີດຂຶ້ນຢູ່ໃນດິນແດນຂອງ ສປປ ລາວ ແມ່ນ ຖືກເສຍອາກອນມູນຄ່າເພີ່ມຂອງ ສປປ ລາວ ໂດຍໃຫ້ຜູ້ຊື້ການບໍລິການຂົນສົ່ງຈາກຜູ່ທີ່ບໍ່ມີພູມລຳເນົາ ເປັນຜູ້ຄິດໄລ່ຫັກ ອາກອນມູນຄ່າເພີ່ມ ລວມ ທັງຄິດໄລ່ເກັບອາກອນກຳໄລແບບບັງຄັບ(ເປັນຖ້ຽວ) ໄວ້ກ່ອນຈະເບີກຈ່າຍເງິນໃຫ້ແກ່ຜູ້ສະໜອງທີ່ບໍ່ມີພູມລຳເນົາ ຕາມທີ່ໄດ້ກຳນົດໄວ້ຢູ່ໃນ ມາດຕາ 10, ແລະ ມາດຕາ 15 ຂອງກົດໝາຍອາ ກອນມູນຄ່າເພີ່ມ ແລະ ຕາມທີ່ກຳນົດໄວ້ໃນ ມາດຕາ 32, 33 ແລະ ມາດຕາ 39 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ແລ້ວເຮັດບັນຊີແຈ້ງ ມອບພາຍໃນກຳນົດ 10 ວັນ;

3. ສ່ວຍສາອາກອນ ປະຈຳແຂວງ, ນະຄອນຫຼວງ, ສ່ວຍສາອາກອນ ປະຈຳເມືອງ,ເທດສະບານ , ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.
4. ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມສ່ວຍສາອາກອນ

ກະຊວງ ການເງິນ
ກົມສ່ວຍສາອາກອນ

ພູທະນູເພັດ ໄຊສົມບັດ